# ໂຮງຮຽນວັນອາທິດ

## ວັນອາທິດ ທີ 14 ມີຖຸນາ 2010 (3/14/2010)

---

## ເມື່ອມີການຜິດສິນທັມເຂົ້າມາໃນຄຣິສຕະຈັກ

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** 1ໂກລິນໂທ 5:1-5, 9-13; 6: 15-20

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ບົດຮຽນນີ້ສາມາດຊ່ວຍໃຫ້ທ່ານພິຈາຣະນາເບິ່ງວິທີທາງທີ່ຊັກນໍາທ່ານໃຫ້ຕົກເຂົ້າໄປຢູ່ໃນຄວາມບາບຂອງການຮ່ວມເພດຜິດສິນທັມດ້ວຍການຄອບງໍາທ່ານທາງດ້ານຮີດຄອງປະເພນີ ແລະວິທີທາງທີ່ທ່ານຈະປົກປ້ອງດ້ວຍການຍຶດຖືຫຼັກຄຸນນະທັມຂອງທ່ານແລະການໃຫ້ກຽດຊື່ສຽງ ກຽດສັກສີຂອງຄຣິສຕະຈັກຂອງທ່ານ.

**<u>ເປົ້າໝາຍຂອງບົດຮຽນນີ້:</u>**

ຂໍ້ກໍານົດຂອງພຣະເຈົ້າ___ບໍ່ຢູ່ເໜືອກວ່າມາດຕະຖານຂອງວັດທະນະທັມ___ຈາກພື້ນຖານຫຼັກຄວາມເຊື່ອຈໍາເພາະສິນທັມຂອງຄຣິສຕຽນ. ຄຣິສຕະຈັກຈໍາຕ້ອງຍົກສູງມາດຕະຖານຂໍ້ບັນຍັດຂອງພຣະເຈົ້າ.

**<u>ຄວາມສໍາຄັນຂອງບົດຮຽນ:</u>**

ພວກເຮົາດໍາລົງຊີວິຢູ່ໃນສັງຄົມທີ່ເຕັມໄປດ້ວຍການບິດເບືອນຄວາມຈິງແລະປະກອບດ້ວຍການຜິດສິນທັມທາງເພດ. ຄຣິສຕຽນຫຼາຍທ່ານມີຄວາມຮູ້ສຶກເມີນເສີຍຕໍ່ການຜິດສິນທັມກຽວກັບເຣື່ອງການຜິດຊາຍຍິງທີ່ປາກົດມີຂຶ້ນຢູ່ທົ່ວໄປໂດຍຄິດວ່າມັນບໍ່ມີສ່ວນກ່ຽວຂ້ອງກັບຄວາມເຊື່ອຂອງເຂົາ ຊໍ້າບໍ່ພໍຍັງປ່ອຍປະລະເລີຍໃຫ້ເຫດການເຫຼົ່ານີ້ເກີດໃນຊີວິດຂອງເຂົາອີກ. ພຣະເຈົ້າມີຂໍ້ມາດຕະຖານອັນດຽວຂອງການຮ່ວມເພດສັມພັນທີ່ຖືກຕ້ອງທີ່ສຸດ___ການຮ່ວມເພດສັມພັນແມ່ນມີຂຶ້ນໃນຂອບເຂດຈໍາກັດຂອງການແຕ່ງງານລະວ່າງສາມີແລະພັນລະຍາຂອງລາວ. ຄຣິສຕະຈັກສົມຄວນຍຶດຖືໃນບັນຍັດຂໍ້ນີ້.

ໜັງສືພິມອອກຂ່າວຕອນເຊົ້າພາດຫົວເຣື່ອງ"ຂ່າວສະເທືອນໃຈເຣື່ອງເພດສັມພັນທີ່ເກີດຂຶ້ນໃນຄຣິສຕະຈັກທ້ອງຖິ່ນ." ທ່ານຈະໃຫ້ຂໍ້ເປີດເຜີຍຢ່າງໃດກັບເຈົ້າໜ້າທີ່ໆຄົ້ນພົບວ່າຜູ້ອາສາສມັກຮັບເບິ່ງແຍງເດັກໃນຄຣິສຕະຈັກໄດ້ທໍາການຂົ່ມຂືນສໍາເລົາເດັກໃນຂະນະເດັກຢູ່ໃນລະວ່າງຄວາມຮັບຜິດຊອບຂອງຄຣິສຕະຈັກ. ທ່ານຈະຮັບຜິດຊອບຕໍ່ຂ່າວນີ້ຢ່າງໃດ? ຄຣິສຕະຈັກຂອງທ່ານເດຈະຮັບຜິດຊອບຢ່າງໃດ?

ສັງຄົມເຮົາມັກຈະຫຼີງໄຫຼແລະປ່ອຍປະລະເລີຍໃຫ້ສັງຄົມຊູ້ສາວເກີດຂຶ້ນຢູ່ເລື້ອຍໆ, ແຕ່ບາງກໍຣະນີຂອງການຮ່ວມເພດສໍາພັນກໍເປັນບາບ, ເຊັ່ນການຫຼອກລວງເດັກບໍ່ເຖິງກະສຽນ ແມ່ນຕ້ອງຖືກໂທດຢ່າງຮ້າຍແຮງ. ການຮຽນບົດຮຽນນີ້ສາມາດຊ່ວຍເຮົາໃຫ້ມອງເຫັນອໍານາດຂອງການຊັກຈູງເຮົາເຂົ້າໃນການຮ່ວມເພດທີ່ຜິດຕໍ່ສິນທັມແນວໃດ ດ້ວຍອາລົມຄວາມຕ້ອງການຂອງເຮົາແນວໃດ ແລະທ່ານມີວິທີທາງທີ່ຈະປ້ອງກັນຢ່າງໃດໃນການຍຶດຖືຫຼັກຄຸນນະທັມແລະຄວາມນັບໜ້າຖືຕາຂອງທ່ານໃນຄຣິສຕະຈັກ

**<u>ສຶກສາພຣະຄັມພີ</u>**

**1. <u>ຄວາມບາບຍັງເປັນທີ່ສະດຸດໃຈເຮົາຢູ່ບໍ່</u>?** 1ໂກຣິນໂທ 5:1-2

ຄຣິສຕຽນເມືອງໂກຣິນໂທດຳລົງຊີວິດໃນຖ້າມກາງຄວາມບໍ່ຖືກຕ້ອງຂອງການຜິດຊາຍຍິງ. ໃນບາງຄົນຈະທົນສູ້ກັບອຳນາດຊັກນຳຂອງວັດທະນະທັມຂອງພວກເຂົາ, ແຕ່ບາງພວກກໍພ່າຍແພ້ຕໍ່ການເຍົ້າຍວນຂອງການເລົ້າໂລມໃຈ. ທ່ານໂປໂລໄດ້ຮູ້ຂ່າວກ່ຽວກັບຂໍ້ແທ້ຈິງຂອງການຜິດຊາຍຍິງ. ໃນພາສາກຣີກຄຳວ່າຜິດຊາຍຍິງນັ້ນມີຄວາມໝາຍຢ່າງກວ້າງຂວາງໃນເຣື່ອງທີ່ເກີດຂຶ້ນ, ແຕ່ທີ່ນີ້ເປັນເຣື່ອງກ່ຽວໂຍງໄປເຖິງເຣື່ອງຂອງຊາຍຄົນນຶ່ງທີ່ຢູ່ກິນກັບພັນລະຍາຂອງພໍ່ຂອງລາວ. ຜູ້ຍິງຄົນນັ້ນອາດຈະເປັນແມ່ລ້ຽງຂອງຊາຍຄົນນັ້ນ. ພວກເຂົາມີການຮ່ວມເພດສັມພັນທີ່ຜິດປະເວນີທີ່ຖືວ່າເປັນການຮ່ວມປະເວນີຂອງຊາຍຍິງທີ່ມີບິດາມານດາດຽວກັນທີ່ກົງກັນກັບຂໍ້ກົດໝາຍຂອງເຮັບເຣີ (ພຣະບັນຍັດ18:8). ບໍ່ແມ່ນວ່າຈະເປັນໄພ່ພົນຂອງພຣະເຈົ້າແລ້ວຈະບໍ່ໄດ້ຖືຕັກສິນວ່າມີຄວາມຜິດໃນການປະພຶດປະຕິບັດເຊັ່ນນີ້. ທ່ານໂປໂລຕໍ່ວ່າໃນຄວາມອ່ອນແອຂອງຄຣິສຕະຈັກທີ່ມີຄວາມກ່ຽວພັນກັບບັນຫາທີ່ເກີດຂຶ້ນ. ແທນທີ່ເຂົາຈະມີຄວາມສະດຸດໃຈກັບບັນຫາທີ່ເກີດຂຶ້ນ, ເຂົາກັບເກີດມີຄວາມປິຕິຍິນດີກັບມັນອີກຊໍ້າ!

ໃນສັງຄົມປັດຈຸບັນ, ທຸກສິ່ງທຸກຢ່າງກໍຜ່ານໄປ. ການຜິດຊາຍຍິງເປັນທີ່ໜ້າຢ້ານກົວຫຼາຍທີ່ສຸດໃນສັງຄົມຂອງເຮົາ ແຕ່ຄົນໃນສັງຄົມຂອງພວກເຮົາກັບເຫັນພ້ອມກັບການຜິດທຳນອງຄອງທັມເຊັ່ນນີ້ ການຜິດຊາຍຍິງນັ້ນຖືວ່າເປັນຂອງທັມມະດາ. ຄຣິສຕຽນຈຳເປັນຕ້ອງກຳຈັດຄວາມຮູ້ສຶກທີ່ກໍ່ໃຫ້ເກີດການຜິດຊາຍຍິງທີ່ເຂົາ "ທົນຍອມ". ພວກເຮົາຜູ້ທີ່ເຊື່ອຈຳຕ້ອງເຂົ້າໃຈກ່ຽວກັບຄວາມສັມພັນທາງເພດທີ່ຖືກຕ້ອງໃນການດຳລົງຊີວິດຂອງເຮົາທີ່ຈະນຳຜົນສະທ້ອນໃນການເປັນພະຍານຂອງເຮົາ.

## 2. **<u>ພວກເຮົາຄວນຕອບຮັບຕໍ່ສະມາຊິກທີ່ຫຼົ້ນຊູ້ຢ່າງໃດ?</u>** 1ໂກຣິນໂທ 5:9- 13

ທ່ານໂປໂລໄດ້ຂຽນຈົດໝາຍມາຫາເຂົາກ່ອນໜ້ານີ້ແລ້ວວ່າ **ບໍ່ຄວນຮ່ວມຄົບຄ້າສະມະຄົມກັບຄົນທີ່ຫຼົ້ນຊູ້.** ປາກົດວ່າຊາວຄຣິສຕຽນໂກຣິນໂທເຂົ້າໃຈວ່າ ທ່ານໂປໂລໄດ້ໝາຍຄວາມວ່າພວກເຂົາຄວນຫຼີກຈາກການຕິດຕໍ່ພົວພັນກັບຄົນທີ່ຫຼົ້ນຊູ້ຢູ່ໃນສັງຄົມ__ ແຕ່ບໍ່ໄດ້ໝາຍຄວາມວ່າຕ້ອງແຍກຕົວອອກໄປຢູ່ຄົນດຽວ. ເຈດຕະນາຂອງທ່ານໂປໂລແມ່ນໃຫ້ເຂົາຫຼີກຈາກການຕິດຕໍ່ພົວພັນກັບຄົນທີ່ຫຼົ້ນຊູ້ທີ່ຢູ່ພາຍໃນຄຣິສຕະຈັກ (ຂໍ້. 11).

ທ່ານໂປໂລນັບລວມເຂົ້າກັນກັບລາຍຊື່ຂອງຄວາມບາບໃນສັງຄົມຊາວໂກຣິນໂທ. ທ່ານຢາກໃຫ້ຄຣິສຕຽນເຫຼົ່ານັ້ນຈຳໄດ້ວ່າການທົດລອງອື່ນທີ່ນຳໄປສູ່ຄວາມບາບໃນໂລກທີ່ເຂົາຢູ່ນີ້. ນອກຈາກການເລວຮ້າຍທາງດ້ານເພດສັມພັນທີ່ວ່າເປັນການກະຕຸ້ນທີ່ເປັນຄວາມຫ່ວງໃຍຂອງທ່ານ. ທ່ານກ່າວເຖິງຄວາມບາບຂອງຄວາມໂລບ ການສໍ້ໂກງດ້ານເງິນຄຳ, ແລະຄົນຂາບໄຫວ້ພຣະທຽມ. ໃນທຸກມື້ນີ້ຄົນສ່ວນຫຼາຍກໍຍັງເມີນເສີຍຕໍ່ມາດຕະຖານຂອງພຣະເຈົ້າກ່ຽວກັບຖານະທາງດ້ານການເງິນ. ຄົນສ່ວນຫຼາຍຍັງຜິດບາບໃນການຂາບໄຫວ້ພຣະທຽມ, ສັນເສີນນະມັສການສິ່ງທີ່ສ້າງຂຶ້ນເຊັ່ນ ການຮ່ວມເພດ, ເງິນ, ແລະຊື່ສຽງຫຼາຍກວ່າພຣະເຈົ້າ (ໂຣມ1:25). ໃນຂໍ້ 11 ທ່ານໂປໂລໄດ້ຕື່ມຄວາມບາບຂອງການເມົາເຫຼົ້າແລະເວົ້າຫຍາບຊ້າ.

ຄຣິສຕະຈັກຄວນຫຼີກຈາກການຕິດຕໍ່ພົວພັນຄົນທີ່ເຊື່ອແຕ່ບໍ່ກັບໃຈຈາກຄວາມຜິດບາບເຫຼົ່ານີ້. ເໝາະທີ່ສຸດທີ່ຄຣິສຕະຈັກຈະທຳການຊຳຣະກັບຄວາມບາບຂອງສະມາຊິກໃນຄຣິສຕະຈັກ, ຊ່ວຍເຂົາໃຫ້ປ່ຽນການປະພຶດຂອງເຂົາ. ໂປໂລໄດ້ເວົ້າວ່າຄຣິສຕະຈັກບໍ່ສົມຄວນຈະຄົບຄິດກັບຄົນບາບຢ່າງນັ້ນ. ແມ່ນແຕ່ກິນເຂົ້າຮ່ວມກໍຢ່າຊູ່ກິນ. ທ່ານໂປໂລອາດໝາຍເຖິງການຮັບປະທານອາຫານທັມດາ, ບໍ່ໄດ້ໝາຍເຖິງພິທີສິນມະຫາສນິດ.

ຄວາມຫ່ວງໃຍຂອງທ່ານໂປໂລບໍ່ແມ່ນຄົນທີ່ຢູ່ນອກຄຣິສຕະຈັກ. ພຣະເຈົ້າພິພາກສາຄົນພາຍນອກ. ທ່ານໂປໂລຕ້ອງການໃຫ້ຄຣິສຕະຈັກປະຕິບັດກັບສະມາຊິກແລະໃຫ້ຍົກເອົາພຣະທັມຈົດເຊັ່ນບັນຊີ 17:7 ເພື່ອເຕືອນສະຕິພວກເຂົາໃນສາຍພຣະເນດຂອງພຣະເຈົ້າ. ຄຣິສຕະຈັກບໍ່ແມ່ນຫໍຜະລິດພັນຂອງນັກບຸນແຕ່ເປັນໂຮງໝໍສຳລັບຄົນບາບ. ຄຣິສຕຽນເຮັດບາບຢູ່ເລື້ອຍໆ, ແຕ່ຄວາມຫ່ວງໃຍຂອງທ່ານໂປໂລແມ່ນທີ່ຄຣິສຕະຈັກຊາວໂກຣິນໂທທີ່ມີຄວາມຈອງຫອງກ່ຽວກັບຄວາມບາບທີ່ບໍ່ກັບໃຈໃໝ່.

ຄຣິສຕະຈັກໃນທຸກມື້ນີ້ບໍ່ສົມຄວນປະນີປະນອມກັບຄົນບາບທີ່ບໍ່ກັບໃຈ. ນັກສຶກສາພຣະຄັມພີໄດ້ເຫັນຄໍາຕັກເຕືອນຂອງທ່ານໂປໂລໄດ້ຄຽງຄູ່ກັນໄປກັບຄໍາສອນຂອງອົງພຣະເຢຊູຄຣິດທີ່ເປັນການສັ່ງສອນກ່ຽວກັບພີ່ນ້ອງທີ່ເຕັມໄປດ້ວຍຄວາມບາບ (ມັດທາຍ 18:15-20). ໃນພຣະເຢຊູແລະທ່ານໂປໂລແມ່ນຕ້ອງການໃຫ້ຄົນບາບກັບມາມີສາຍສໍາພັນອັນແຂງແກ່ນຂຶ້ນໃໝ່ໃນພຣະເຈົ້າແລະຄຣິສຕະຈັກ,

ຄວາມບາບທີ່ເຮົາປະເຊີນຢູ່ໃນທຸກວັນນີ້ສິ່ງຜົນສະທ້ອນໃຫ້ເຫັນຢູ່ເປັນປະຈໍາຂອງການຊັກຈູງຂອງວັດທະນະທັມຂອງພວກເຮົາ. ຄວາມບາບຫຼາຍຢ່າງເກີດຂຶ້ນຜ່ານທາງອາຍຸ, ແຕ່ຄວາມບາບບາງຢ່າງເກີດຂຶ້ນເລື້ອຍເມື່ອປະເພນີເຮັດໃຫ້ເປັນທີ່ນິຍົມຊົມຊອບຂອງເຂົາ.

### 3. <u>ແມ່ນຫຍັງຄືສິ່ງທີ່ຜິດພາດໃນຄວາມສັມພັນທາງເພດ</u>? 1ໂກຣິນໂທ 6:15- 20

ບໍ່ວ່າເຮົາຈະເຮັດອັນໃດອັນນຶ່ງກັບຮ່າງກາຍຂອງເຮົາກໍບໍ່ໄດ້ສິ່ງຜົນເສັຽແຕ່ຢ່າງໃດໃຫ້ກັບພຣະເຈົ້າ. ແຕ່ຈະເປັນການດີທີ່ສຸດຖ້າວ່າທ່ານແລະຂ້າພະເຈົ້າມອບຊີວິດແລະການເປັນຢູ່ຂອງເຮົານັ້ນໃຫ້ກັບອົງພຣະເຢຊູຄຣິດ. ອົງພຣະເຢຊູໄດ້ສິດສອນເຮົາໃຫ້ຮັກພຣະເຈົ້າດ້ວຍສຸດຊີວິດຈິດໃຈຂອງເຮົາ (ມັດທາຍ 22:37). ທ່ານໂປໂລມີຄວາມປາຖນາຢາກໃຫ້ຄຣິສຕຽນເມືອງໂກຣິນໂທມີຄວາມຈົງຮັກພັກດີຕໍ່ພຣະເຈົ້າດ້ວຍຮ່າງກາຍແລະວິນຍານຈິດຂອງເຂົາ.

ມີຄົນຈໍານວນນຶ່ງມີການຮ່ວມເພດສັມພັນຢ່າງບໍ່ຖືກຕ້ອງເພາະເຂົາເຂົ້າໃຈຜິດວ່າເຂົາມີຄວາມສາມາດຈະເຮັດທຸກສິ່ງທຸກຢ່າງໄດ້ກັບຮ່າງກາຍຂອງເຂົາ. ມີຄຣິສຕຽນໂກຣິນໂທອີກຈໍາພວກນຶ່ງໄດ້ສະແດງໃຫ້ເຫັນຢ່າງເຕັມປ່ຽມໃນຄວາມຄິດຂອງເຂົາວ່າເຂົາມີສິດເສລີພາບຢ່າງເຕັມທີໃນພຣະຄຣິດ ແລ້ວພຣະອົງກໍໃຫ້ສິດເສລີພາບນັ້ນແກ່ເຂົາໃນການທີ່ຈະເຮັດທຸກສິ່ງ ດັ່ງນັ້ນເຂົາຈິ່ງເຮັດທຸກຢ່າງຕາມຄວາມປາຖນາ. ທ່ານໂປໂລໄດ້ຊີ້ໃຫ້ເຫັນຢ່າງຈະແຈ້ງວ່າມີແຕ່ຄົນທີ່ເຕັມໄປດ້ວຍຄວາມບາບເທົ່ານັ້ນທີ່ນິຍົມຊົມຊອບໃຊ້ຄໍາເວົ້າກັນຢ່າງນີ້ "ເຮົາເຮັດທຸກສິ່ງສາລະພັດໄດ້ບໍ່ມີໃຜຫ້າມ" (6:12) ພຣະຄໍາຂໍ້ນີ້ເປັນຂໍ້ແກ້ຕົວໃນການທໍາບາບ. ທ່ານໂປໂລໄດ້ເວົ້າແລ້ວເວົ້າອີກວ່າຮ່າງກາຍຂອງຜູ້ເປັນຄຣິສຕຽນນັ້ນເປັນທີ່ສະຖິດຢູ່ຂອງພຣະວິນຍານບໍຣິສຸດ, ແລະເຮົາຕ້ອງໃຫ້ຄວາມຈົງຮັກພັກດີຂອງເຮົາຕໍ່ພຣະເຈົ້າດ້ວຍຮ່າງກາຍຂອງເຮົາ.

ທ່ານໂປໂລໄດ້ແນໃສ່ຄວາມບາບທີ່ຕິດພັນຢູ່ກັບ**ຍິງແມ່ຈ້າງ.** ມີບາງຄົນໄດ້ເຫັນວ່າເຣື່ອງນີ້ເປັນເຣື່ອງທັມດາ. ການສົມສູ່ກ່ອນແຕ່ງງານ, ແຕ່ງງານແລ້ວແຕ່ຍັງສົມສູ່ຢູ່ກັບຄົນອື່ນ, ແລະຄວາມສໍາພັນທາງເພດອື່ນໆບໍ່ໄດ້ກ່ຽວກັບຄວາມບາບ. ເຂົາຄິດໃນໃຈວ່າ, ສາຍເຫດທີ່ເຂົາເຮັດຢ່າງນັ້ນກໍແມ່ນເຮັດໃນຮ່າງກາຍຂອງເຂົາບໍ່ໄດ້ມີຄວາມສໍາຄັນຫຍັງກັບພຣະເຈົ້າ. ທ່ານໂປໂລໄດ້ປະເຊີນກັບຄວາມບາບຄືຊາຍຄົນນຶ່ງສົມສູ່ຢູ່ກິນກັບເມັຽຂອງພໍ່ໃນຂໍ້ທີ 5. ແລະເວລານີ້ທ່ານພະຍາຍາມແກ້ບັນຫາເຣື່ອງຍິງໂສເພນີ, ກ່ຽວກັບເຣື່ອງນີ້ຄົນໃນສມັຍກ່ອນແມ່ນຖືເບົາ,

ທ່ານໂປໂລໄດ້ຍົກເອົາພຣະທັມປະຖົມມະການ 2:24 ເຕືອນຄຣິສຕຽນຊາວໂກຣິນໂທໃຫ້ຮູ້ເຖິງພຣະປະສົງຂອງພຣະເຈົ້າໃນການຮ່ວມເພດ. ແຜນຂອງພຣະເຈົ້ານັ້ນກໍຄືໃຫ້ຜູ້ຊາຍແລະຜູ້ຍິງໄດ້ແຕ່ງງານກັນແລະເກີດເປັນກາຍອັນດຽວຍ້ອນຄວາມສັມພັນນັ້ນທັງສອງຈິ່ງເຂົາຮ່ວມເພດກັນ. ຄໍາວ່າເປັນກາຍອັນດຽວກັນນັ້ນບໍ່ພຽງແຕ່ມີຄວາມໃກ້ຊິດສນິດສນົມກັນທາງເພດເທົ່ານັ້ນແຕ່ຍັງເປັນຂໍ້ຜູກມັດລະຫວ່າງຜູ້ຊາຍແລະຜູ້ຍິງຄືຜູ້ທີ່ເປັນສາມີແລະພັນລະຍາ. ດັ່ງນັ້ນການຮ່ວມເພດກັບຍິງໂສເພນີຈຶ່ງເປັນການທໍຣະຍົດຕໍ່ແຜນການຂອງພຣະເຈົ້າ ໃນສາຍພຣະເນດຂອງພຣະເຈົ້າແລ້ວການຮ່ວມເພດກັບຜູ້ໃດຜູ້ນຶ່ງນັ້ນແມ່ນເຮົາເປັນກາຍອັນນຶ່ງອັນດຽວກັນ. ດັ່ງນັ້ນການຮ່ວມເພດຂອງເຮົານັ້ນຕ້ອງເຮັດຕາມຄໍາມັ້ນສັນຍາຂອງເຮົາທີ່ມີຕໍ່ພຣະເຈົ້າ. ເພາະວ່າຜູ້ທີ່ຕິດພັນກັບອົງພຣະຜູ້ເປັນເຈົ້າກໍເປັນຈິດໃຈອັນດຽວກັບພຣະອົງ. ດັ່ງນັ້ນບໍ່ວ່າເຮົາຈະເຮັດສິ່ງໃດຕໍ່ຮ່າງກາຍຂອງເຮົາຫຼືຈິດວິນຍານຂອງເຮົາຈະມີການພົວພັນກັບພຣະອົງທັງນັ້ນ.

ທ່ານໂປໂລໄດ້ຮຽກຮ້ອງໃຫ້ເຮົາຫຼີບຫຼີກຈາກຄວາມບາບທາງດ້ານເພດສັມພັນໂດຍກົງ: **ຈົ່ງຫຼີກໜີຈາກການຮ່ວມເພດສັມພັນທີ່ຜິດສິນທັມ!** ທຸກວັນນີ້ພວກເຮົາປະເຊີນໜ້າກັບການທົດລອງກ່ຽວກັບເຣື່ອງເພດເປັນຕົ້ນໃນການໂຄສະ

ນາທາງໂທຣະທັດ.ຮູບເງົາ, ແລະປື້ມດາຣາຕ່າງໆ. ທາງທີ່ຈະເອົາຊະນະຈາກການທົດລອງດັ່ງກ່າວນີ້ໄດ້ກໍຄືໃຫ້ຫຼີກໜີຈາກສິ່ງເຫຼົ່ານີ້. ຮູບລາມົກຕ່າງໆໃນອິນເຕີແນັດເປັນຄວາມບາບອີກຢ່າງນຶ່ງຊຶ່ງຜູ້ຊາຍແລະຜູ້ຍິງມັກຈະເບິ່ງກັນໃນທຸກວັນນີ້.

ເມື່ອໂຢເຊບປະເຊີນກັບການທົດລອງທີ່ນຳໄປສູ່ຄວາມບາບກັບເມັຽຂອງໂປຕີຟາ, ລາວໄດ້ແລ່ນໜີ ( ປະຖົມມະການ 39:1-12). ເຖິງແມ່ນວ່າໂຢເຊບຖືກໃສ່ຮ້າຍກໍຕາມ, ແຕ່ລາວໄດ້ຕັ້ງໝັ້ນໃນຄວາມມີສິນທັມຄືໄດ້ໜີຈາກຄວາມຊັກນຳໃຫ້ເຮັດບາບ. ທຸກມື້ນີ້ເຮົາທຸກຄົນຄວນເຮັດເຊັ່ນດຽວກັນ ຄວນຫຼົບຫຼີກຈາກຄວາມບາບຢ່າອ່ອນຂໍ້ຕໍ່ມັນ.

ທ່ານໂປໂລໄດ້ພັນລະນາເຖິງ**ຮ່າງກາຍຂອງເຮົາເປັນວິຫານຂອງພຣະວິນຍານບໍຣິສຸດ.** ດັ່ງນັ້ນຮ່າງກາຍຂອງເຮົາແລະຈິດວິນຍານຂອງເຮົາຈຶ່ງມີການພົວພັນກັນໂດຍຕົງກັບພຣະເຈົ້າ. ທ່ານໂປໂລຍັງໄດ້ເນັ້ນໃຫ້ເຫັນອີກວ່າທີ່ພຣະເຢຊູຄຣິດໄດ້ສິ້ນພຣະຊົນເທິງໄມ້ກາງແຂນນັ້ນກໍເພື່ອໄຖ່ພວກເຮົາ. ເຮົາທັງຫຼາຍໄດ້ຖືກ**ຊື້ໄວ້ດ້ວຍຣາຄາອັນສູງ**, ຄືການສິ້ນພຣະຊົນຂອງພຣະເຢຊູຄຣິດນັ້ນເອງ. ເຮົາໄດ້ຮັບຄວາມມີສິດເສລີພາບພົ້ນຈາກບາບຂອງເຮົາກໍຍ້ອນການສິ້ນພຣະຊົນແລະການຄືນພຣະຊົນຂອງອົງພຣະເຢຊູຄຣິດ. ເຫດສັນນັ້ນຈຶ່ງຖວາຍກຽດແກ່ພຣະເຈົ້າດ້ວຍຮ່າງກາຍຂອງເຮົາ.

## ບົດຮຽນແຫ່ງຊີວິດ.

ມາດຕະຖານຂອງພຣະເຈົ້າສຳລັບໄພ່ພົນຂອງພຣະອົງມັກຈະເປັນຂໍ້ໂຕ້ແຍ້ງກັບຮີດຄອງປະເພນີໃນທຸກວັນນີ້. ພຣະປະສົງຂອງພຣະເຈົ້າຕ້ອງການໃຫ້ການຮ່ວມເພດສັມພັນນັ້ນເກີດຂຶ້ນຢ່າງຖືກຕ້ອງ ຕາມແຜນການທີ່ພຣະອົງຊົງກຳນົດໄວ້ໃນພຣະຄັມພີ ຄືຜູ້ທີ່ແຕ່ງງານ(ຜູ້ຊາຍແລະຜູ້ຍິງທີ່ແຕ່ງງານກັນ). ແຕ່ວ່າໃນທຸກມື້ນີ້ການເລົ້າໂລມທາງເພດແມ່ນມີເສລີພາບເຕັມຂີດ. ເຖິງແມ່ນວ່າທ່ານໂປໂລກໍຍັງໄດ້ປະເຊີນໜ້າກັບການແກ້ໄຂບັນຫາຢ່າງນີ້ແລະເຣື່ອງຂອງຍິງໂສເພນີອີກ, ຄຳແນະນຳທີ່ເປັນວິທີທາງທີ່ດີສຳລັບຕົວຂອງທ່ານກໍຄື__ຈົ່ງຢູ່ຫ່າງໄກຈາກມັນ: ພວກເຮົາຄວນຖວາຍຄວາມຈົງຮັກພັກດີຕໍ່ພຣະເຈົ້າດ້ວຍຮ່າງກາຍຂອງເຮົາ.

ທຸກມື້ນີ້ພວກເຮົາມີຄວາມຄິດເຫັນຢ່າງໃດຕໍ່ການກະທົບກະເທືອນຂອງວັດທະນະທັມຂອງໂລກທີ່ມີຕໍ່ເຮົາແລະຄຣິສຕະຈັກຂອງເຮົາ?

- ❖ ເຮົາຕ້ອງເຝົ້າລະວັງຢູ່ສເມີເພາະວ່າວັດທະນະທັມຂອງໂລກນັ້ນມັນຈະນຳພາເຮົາໄປສູ່ທາງເພດທີ່ຜິດສິນທັມໂດຍເຮົາບໍ່ຮູ້ສຶກຕົວ.
- ❖ ເຮົາຄວນຈົດຈຳເອົາໄວ້ຢູ່ສເມີວ່າສະມາຊິກຢູ່ໃນຄຣິສຕະຈັກຂອງເຮົານັ້ນອາດມີບາງຄົນໄດ້ມີສ່ວນຮ່ວມໃນການຜິດສິນທັມທາງນີ້.
- ❖ ເຮົາຈະຕ້ອງປະພຶດປະຕິບັດຢ່າງໃດກັບຜູ້ທີ່ມີສ່ວນຮ່ວມໃນການຜິດສິນທັມທາງເພດຢູ່ໃນຄຣິສຕະຈັກເຮົາບໍ່? ເຮົາຈະໃຊ້ວິທີການຕັດສິນຄວາມເຂົາຫຼືອົບຮົມສັ່ງສອນເຂົາດ້ວຍຄວາມຮັກ?
- ❖ ຢູ່ໃນຄຣິສຕະຈັກຂອງພຣະເຈົ້າເຮົາສາມາດໃຫ້ຄວາມອົບຮົມ ເຕືອນສະຕິ ສັ່ງສອນກັນແລະກັນກ່ຽວກັບການຖວາຍກຽດຕໍ່ອົງພຣະຜູ້ເປັນເຈົ້າດ້ວຍການຖວາຍຮ່າງກາຍຂອງເຮົາໃຫ້ເປັນເຄື່ອງບູຊາທີ່ມີຊີວິດ.
- ❖ ເຮົາສາມາດທີ່ຈະຫຼີກລ້ຽງຈາກການຍອມອ່ອນຂໍ້ໃຫ້ກັບຄວາມບາບທີ່ຈະຊັກນຳເຮົາໃຫ້ເຂົ້າໄປສູ່ຄວາມຜິດທາງເພດທີ່ຜິດສິນທັມ.
- ❖ ເຮົາສາມາດສົ່ງເສີມແລະໃຫ້ກຳລັງໃຈກັບຄຣູສອນຢູ່ໃນຄຣິສຕະຈັກຂອງເຮົາໄດ້ໂດຍສະແດງອອກໃຫ້ເຫັນໃນຂໍ້ພຣະຄັມພີທີ່ກ່າວໄວ້ເຖິງເຣື່ອງການຮ່ວມເພດຈະມີຂຶ້ນກໍຕໍ່ເມື່ອມີການສົມຣົດເທົ່ານັ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ WWW.lsbf.org ໂດຍ LLBC.**